ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງຊຽງຂວາງ

ເລກທີ 132/ຈຂ.ຊຂ

ວັນທີ 15.02.2019

# ຂໍ້ຕົກລົງ
# ວ່າດ້ວຍ ການຄຸ້ມຄອງທາງຫຼວງຂອງແຂວງ

- ອີງຕາມ ກົດໝາຍ ວ່າດ້ວຍ ການປົກຄອງທ້ອງຖິ່ນ ແຫ່ງ ສປປ ລາວ ສະບັບເລກທີ 068/ສພຊ, ລົງວັນທີ 14 ທັນວາ 2015;
- ອີງຕາມ ກົດໝາຍ ວ່າດ້ວຍ ການຈະລາຈອນທາງບົກ (ສະບັບປັບປຸງ) ເລກທີ 23/ສພຊ, ລົງວັນທີ 12 ທັນວາ 2012, ກົດໝາຍ ວ່າດ້ວຍ ທາງຫຼວງ ສະບັບປັບປຸງ ເລກທີ 03/ສພຊ, ລົງວັນທີ 8 ພະຈິກ 2016;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ສະບັບເລກທີ 188/ນຍ, ລົງວັນທີ 03 ກໍລະກົດ 2007 ວ່າດ້ວຍ ການປັບໄໝ ແລະ ມາດຕະການຕ່າງໆ ຕໍ່ຜູ້ລະເມີດລະບຽບກົດໝາຍ ກ່ຽວກັບ ການຈະລາຈອນທາງບົກ, ການຂົນສົ່ງທາງບົກ ແລະ ການປົກປັກຮັກສາທາງຫຼວງ;
- ອີງຕາມ ມະຕິ ກອງປະຊຸມສະໄໝສາມັນ ເທື່ອທີ 5 ຂອງສະພາປະຊາຊົນແຂວງຊຽງຂວາງ ຊຸດທີ I ສະບັບເລກທີ 52/ສພຂ.ຊຂ, ລົງວັນທີ 27 ສິງຫາ 2018;
- ອີງຕາມ ມະຕິ ຂອງຄະນະປະຈຳ ສະພາປະຊາຊົນແຂວງ ສະບັບເລກທີ 10/ຄປຈ.ສພຂ.ຊຂ ລົງວັນທີ 5 ກຸມພາ 2019.

## ເຈົ້າແຂວງ ແຂວງຊຽງຂວາງຕົກລົງ

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕາການ ກ່ຽວກັບ ການຄຸ້ມຄອງທາງຫຼວງພາຍໃນແຂວງ ທີ່ໄດ້ຜັນຂະຫຍາຍມາຈາກ ບັນດາກົດໝາຍ, ນິຕິກຳໃຕ້ກົດໝາຍ, ສະພາບຈຸດພິເສດ ຂອງແຂວງ ແນໃສ່ ປຸກຈິດສຳນຶກໃຫ້ທຸກຄົນ ແລະ ທຸກພາກສ່ວນໃນສັງຄົມ ມີສະຕິ, ມີສ່ວນຮ່ວມ ແລະ ມີຄວາມຮັບຜິດຊອບ ຢ່າງເປັນເອກະພາບ ໃນການຄຸ້ມຄອງ, ບູລະນະ, ປົກປັກຮັກສາ ຕາໜ່າງເສັ້ນທາງທົ່ວແຂວງ ເພື່ອນຳໃຊ້ ໃຫ້ມີປະສິດທິພາບ, ປະສິດທິຜົນສູງສຸດ ແລະ ຍາວນານ ປະກອບສ່ວນເຂົ້າໃນ ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານຂອງແຂວງ ແລະ ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

**ມາດຕາ 2 ນິຍາມ**

ການຄຸ້ມຄອງທາງຫຼວງ ແມ່ນການຄຸ້ມຄອງການນຳໃຊ້ ຢ່າງລວມສູນ ແລະ ເປັນເອກະພາບໃນທົ່ວແຂວງ ດ້ວຍກົດໝາຍ ແລະ ບັນດານິຕິກຳໃຕ້ກົດໝາຍ ເພື່ອຮັບປະກັນເຮັດໃຫ້ເສັ້ນທາງ ທີ່ລັດໄດ້ໃຊ້ງົບປະມານຢ່າງຫຼວງຫຼາຍ ລົງທຶນກໍ່ສ້າງສຳເລັດແລ້ວນັ້ນ ສາມາດຈະລາຈອນໄປມາ ໃຫ້ມີຄຸນນະພາບດີ ແລະ ມີຄຸນປະໂຫຍດສູງສຸດ ໃນທຸກລະດູການຢ່າງຍາວນານ ຕາມທິດສີຂຽວ, ສະອາດ ແລະ ຍືນຍົງ.

**ມາດຕາ 3 ນະໂຍບາຍ ກ່ຽວກັບ ການຄຸ້ມຄອງທາງຫຼວງ.**

ແຂວງ ຊຸກຍູ້, ສົ່ງເສີມ ດ້ວຍການສະໜອງງົບປະມານ ເຂົ້າໃນການລົງທຶນກໍ່ສ້າງ, ບູລະນະລະບົບທາງຫຼວງຂອງແຂວງ, ປະກອບວັດຖຸອຸປະກອນ, ພາຫະນະ, ກົນຈັກ, ເຄື່ອງມື, ການກໍ່ສ້າງວິຊາການ, ການຍົກລະດັບຄວາມ

ຮູ້-ຄວາມສາມາດ ຂອງພະນັກງານ ຕາມແຜນການ ທີ່ສະພາປະຊາຊົນແຂວງ ໄດ້ຮັບຮອງ ໃນແຕ່ລະໄລຍະ;

ແຂວງ ຊຸກຍູ້, ສົ່ງເສີມ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ດ້ວຍການປຸກລະດົມໃຫ້ມີ ສະຕິເຄົາລົບກົດໝາຍ, ປະກອບສ່ວນປົກປັກຮັກສາ ທາງຫຼວງ ເພື່ອຮັບປະກັນເຮັດໃຫ້ ການນຳໃຊ້ ເສັ້ນທາງທີ່ມີແລ້ວ ມີປະສິດທິພາບ, ມີປະສິດທິຜົນສູງສຸດ ຢ່າງຍາວນານ ແລະ ພັດທະນາທາງຫຼວງຂອງແຂວງ ດ້ວຍການປະກອບທຶນຂອງຕົນ ຂະຫຍາຍ ຕາໜ່າງເສັ້ນທາງຫຼວງຂອງແຂວງ ໃຫ້ກວ້າງຂວາງ, ສາມາດເຊື່ອມຈອດກັນ ໃນທົ່ວແຂວງ.

**ມາດຕາ 4 ຫຼັກການ ກ່ຽວກັບ ການຄຸ້ມຄອງທາງຫຼວງຂອງແຂວງ**

ການຄຸ້ມຄອງທາງຫຼວງຂອງແຂວງ ປະຕິບັດ ຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ລັດຖະທຳມະນູນ, ກົດໝາຍ ແລະ ບັນດານິຕິກຳໃຕ້ກົດໝາຍ ກ່ຽວກັບ ທາງຫຼວງ;
2. ສອດຄ່ອງກັບ ນະໂຍບາຍ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ, ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຂອງແຂວງ ໃນແຕ່ລະໄລຍະ;
3. ສະເໝີພາບ, ໂປ່ງໃສ, ຍຸຕິທຳ, ລວມສູນ ແລະ ເປັນເອກະພາບໃນທົ່ວແຂວງ;
4. ຮັບປະກັນການພັດທະນາ, ການປົກປັກຮັກສາ ແລະ ນຳໃຊ້ ເສັ້ນທາງຫຼວງ ໃຫ້ຖືກຕ້ອງຕາມເປົ້າໝາຍ, ມີຄວາມໂລ່ງລ່ຽນ, ສະດວກສະບາຍ, ມີຄຸນນະພາບ ແລະ ຜົນປະໂຫຍດສູງສຸດ ໂດຍບໍ່ສົ່ງຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ຕາມທິດສີຂຽວ, ສະອາດ ແລະ ຍືນຍົງ.

**ມາດຕາ 5 ຂອບເຂດນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ທົ່ວໄປ ສຳລັບ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ແລະ ນຳໃຊ້ເສັ້ນທາງຢູ່ ໃນຂອບເຂດແຂວງຊຽງຂວາງ.

## ໝວດທີ 2
## ປະເພດທາງຫຼວງ

**ມາດຕາ 6 ປະເພດທາງຫຼວງ**

ປະເພດທາງຫຼວງ ທີ່ຜ່ານ ແຂວງຊຽງຂວາງ ປະກອບມີ: ທາງຫຼວງແຫ່ງຊາດ, ທາງຫຼວງຂອງແຂວງ, ທາງຫຼວງຂອງເມືອງ, ທາງຕົວເມືອງ, ທາງຊົນນະບົດ ແລະ ທາງສະເພາະ.

**ມາດຕາ 7 ເຂດສະຫງວນຂອງເສັ້ນທາງ**

1. **ເຂດສະຫງວນຢູ່ໜ້າດິນ ຂອງແຕ່ລະປະເພດທາງຫຼວງ ມີດັ່ງນີ້:**
   - ປະເພດທາງຫຼວງແຫ່ງຊາດ ມີລວງກວ້າງເບື້ອງລະ 25 ແມັດ ນັບແຕ່ໃຈກາງທາງອອກໄປ;
   - ປະເພດທາງຫຼວງຂອງແຂວງ ມີລວງກວ້າງເບື້ອງລະ 15 ແມັດ ນັບແຕ່ໃຈກາງທາງອອກໄປ;
   - ປະເພດທາງຫຼວງຂອງເມືອງ ມີລວງກວ້າງ ເບື້ອງລະ 10 ແມັດ ນັບແຕ່ໃຈກາງທາງອອກໄປ;
   - ປະເພດທາງຊົນນະບົດ ມີລວງກວ້າງເບື້ອງລະ 5 ແມັດ ນັບແຕ່ໃຈກາງທາງອອກໄປ;
   - ປະເພດທາງຕົວເມືອງ ໃຫ້ປະຕິບັດ ຕາມແຜນຜັງຂອງຕົວເມືອງ;
   - ປະເພດທາງສະເພາະ ໃຫ້ປະຕິບັດ ຕາມຈຸດພິເສດສະເພາະ ຂອງແຕ່ລະເສັ້ນທາງ.
2. **ເຂດສະຫງວນກາງອາກາດຢູ່ເທິງໜ້າດິນ ຂອງທຸກປະເພດເສັ້ນທາງຫຼວງ** ຕ້ອງມີລວງສູງແຕ່ 5 ແມັດ ຂຶ້ນໄປ ນັບແຕ່ໜ້າທາງລົດແລ່ນ, ໜ້າທາງຄົນຍ່າງ ແລະ ໜ້າຂົວ;
3. **ເຂດສະຫງວນຢູ່ໃຕ້ດິນຂອງທຸກປະເພດເສັ້ນທາງຫຼວງ** ແມ່ນສະຫງວນໄວ້ ເພື່ອປ້ອງກັນຄວາມ ປອດໄພ ແລະ ກິດຈະການໃດໜຶ່ງຢູ່ໃຕ້ພື້ນທາງ.

## ໝວດທີ 3
## ການຄຸ້ມຄອງທາງຫຼວງ

**ມາດຕາ 8 ອົງການຄຸ້ມຄອງທາງຫຼວງພາຍໃນແຂວງ**

ອົງການຄຸ້ມຄອງທາງຫຼວງຂອງແຂວງ ມີດັ່ງນີ້:

1. ອົງການປົກຄອງທ້ອງຖິ່ນທຸກຂັ້ນ;

2. ພະແນກໂຍທາທິການ ແລະ ຂົນສົ່ງແຂວງ;
3. ຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງ;
4. ຈຸງານໂຍທາທິການ ແລະ ຂົນສົ່ງ ປະຈໍາບ້ານ.

**ມາດຕາ 9 ສິດ ແລະ ໜ້າທີ່ຂອງອົງການປົກຄອງທ້ອງຖິ່ນທຸກຂັ້ນ**

ອົງການປົກຄອງທ້ອງຖິ່ນທຸກຂັ້ນ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ຊີ້ນໍາ, ເຜີຍແຜ່ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ເປັນປົກກະຕິ ແລະ ກວ້າງຂວາງ ເພື່ອເຮັດໃຫ້ທຸກຄົນໃນທົ່ວແຂວງ ຮັບຮູ້, ເຊື່ອມຊຶມ ແລະ ພ້ອມກັນເຂົ້າຮ່ວມຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ;

2. ປຸກລະດົມຂົນຂວາຍ ທົ່ວສັງຄົມ ແລະ ປະຊາຊົນ ໃຫ້ມີສະຕິເຂົ້າຮ່ວມ ການຄຸ້ມຄອງ, ປົກປັກຮັກສາ ແລະ ບູລະນະ ທາງຫຼວງ ໃຫ້ມີຄຸນນະພາບດີ ແລະ ສາມາດນໍາໃຊ້ໄດ້ ຢ່າງຍາວນານ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

3. ປຸກລະດົມຂົນຂວາຍ ກໍາລັງແຮງງານ ແລະ ງົບປະມານ ຈາກສັງຄົມ ແລະ ປະຊາຊົນ ເຂົ້າໃນການແກ້ໄຂໄພພິບັດສຸກເສີນ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ຕາມຄວາມສາມາດຕົວຈິງ ເພື່ອບໍ່ໃຫ້ເສັ້ນທາງຖືກຕັດຂາດ;

4. ຕິດຕາມ, ກວດກາ, ປະເມີນຜົນ ແລະ ຍ້ອງຍໍ ຜູ້ທີ່ມີຜົນງານ ແລະ ລົງວິໄນ ຕໍ່ຜູ້ທີ່ລະເມີດ ຂໍ້ຕົກລົງສະບັບນີ້ ຕາມກໍລະນີໜັກ ຫຼື ເບົາ;

5. ປະຕິບັດໜ້າທີ່ອື່ນໆ ທີ່ກົດໝາຍ ໄດ້ກໍານົດ.

**ມາດຕາ 10 ສິດ ແລະ ໜ້າທີ່ຂອງພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງ**

ພະແນກໂຍທາທິການ ແລະ ຂົນສົ່ງແຂວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເປັນຜູ້ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໂດຍກົງ ໃນຖານະເປັນເສນາທິການ ຂອງອົງການປົກຄອງແຂວງ ໂດຍປະສານສົມທົບກັບ ທຸກພາກສ່ວນທີ່ກ່ຽວຂ້ອງ ຂອງແຂວງ, ເມືອງ ຈັດຕັ້ງເຜີຍແຜ່ໃຫ້ ປະຊາຊົນທຸກຊັ້ນຄົນໄດ້ຮັບຮູ້, ເຂົ້າໃຈ ແລະ ເຂົ້າຮ່ວມ ວຽກງານຄຸ້ມຄອງທາງຫຼວງຂອງແຂວງ ໃຫ້ປະກົດຜົນເປັນຈິງ;

2. ຄົ້ນຄວ້າ ແລະ ຂຶ້ນແຜນໂດຍກົງ ນໍາສະເໜີຂໍ ງົບປະມານຂອງແຂວງ ເພື່ອດໍາເນີນການສໍາຫຼວດ, ອອກແບບການກໍ່ສ້າງ ຫຼື ບູລະນະສ້ອມແປງ ເສັ້ນທາງຫຼວງຂອງແຂວງທຸກປະເພດ;

3. ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ປະເມີນຜົນໂດຍກົງ ຢ່າງເປັນປົກກະຕິ ກ່ຽວກັບການກໍ່ສ້າງ, ສ້ອມແປງ, ການປົກປັກຮັກສາເສັ້ນທາງທັງໝົດ ພາຍໃນແຂວງ;

4. ຮັບເອົາ ການລາຍງານສ່ອງແສງ ຈາກຫ້ອງການ ຍທຂ ເມືອງ ແລະ ອົງການຈັດຕັ້ງຕ່າງໆ ກໍລະນີມີການລະເມີດ ເຂດສະຫງວນຂອງທາງ ຫຼື ການກະທໍາ ທີ່ເປັນການທໍາລາຍ ຫຼື ສິ່ງທີ່ເປັນຜົນກະທົບຕໍ່ເສັ້ນທາງ ເພື່ອມີມາດຕະການແກ້ໄຂ ທີ່ເດັດຂາດ, ເຂັ້ມງວດ, ວ່ອງໄວ, ທັນເວລາ ຕາມທີ່ໄດ້ກໍານົດໄວ້ ໃນຂໍ້ຕົກລົງສະບັບນີ້;

5. ຄົ້ນຄວ້າ, ຂຶ້ນແຜນງົບປະມານ ນໍາສະເໜີ ອົງການປົກຄອງແຂວງ ເພື່ອປຸກລະດົມທຸກພາກສ່ວນ ປະກອບສ່ວນທຶນຮອນ ແລະ ແຮງງານ ໃນການບູລະນະ, ປົກປັກຮັກສາ, ກໍ່ສ້າງ, ສ້ອມແປງ ເສັ້ນທາງພາຍໃນແຂວງ ໃນກໍລະນີເກີດ ໄພພິບັດ ຫຼື ເຫດສຸກເສີນອື່ນໆ ເພື່ອຊອກວິທີແກ້ໄຂໃຫ້ທັນການ ຕາມຄວາມເໝາະສົມ;

6. ລາຍງານສ່ອງແສງ ການຈັດຕັ້ງປະຕິບັດ ວຽກງານຄຸ້ມຄອງທາງຫຼວງ ໃຫ້ອົງການປົກຄອງຂັ້ນແຂວງ ຢ່າງເປັນປົກກະຕິ;

7. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນໆ ຕາມກົດໝາຍ ກໍານົດ ຫຼື ການມອບໝາຍຂອງຂັ້ນເທິງ.

**ມາດຕາ 11 ສິດ ແລະ ໜ້າທີ່ຂອງຫ້ອງການ ໂຍທາທິການ ແລະ ຂົນສົ່ງເມືອງ**

ຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ນໍາເອົາ ຂໍ້ຕົກລົງສະບັບນີ້ ປະສານສົມທົບໂດຍກົງກັບ ທຸກພາກສ່ວນທີ່ກ່ຽວຂ້ອງ ຂອງເມືອງ, ບ້ານ ຈັດຕັ້ງເຜີຍແຜ່ໃຫ້ ປະຊາຊົນທຸກຊັ້ນຄົນ ໄດ້ຮັບຮູ້, ເຂົ້າໃຈ ແລະ ເຂົ້າຮ່ວມ ວຽກງານຄຸ້ມຄອງທາງຫຼວງຂອງແຂວງ ໃຫ້ປະກົດຜົນເປັນຈິງ;

2. ຄຸ້ມຄອງ, ຕິດຕາມ, ກວດກາ, ການກໍ່ສ້າງ, ສ້ອມແປງ, ການປົກປັກຮັກສາເສັ້ນທາງທັງໝົດ ພາຍໃນເມືອງ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

3. ຮັບລາຍງານສ່ອງແສງ ຈາກບ້ານ ແລະ ອົງການຈັດຕັ້ງຕ່າງໆ ກໍລະນີມີ ການລະເມີດ ເຂດສະຫງວນຂອງທາງ ຫຼື ການກະທຳ ທີ່ເປັນການທຳລາຍ ຫຼື ສິ່ງທີ່ມີຜົນກະທົບຕໍ່ເສັ້ນທາງ ເພື່ອກ່າວເຕືອນ, ສຶກສາອົບຮົມ ແລະ ລົງວິໄນ ຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

4. ປຸກລະດົມ ປະຊາຊົນ ປະກອບສ່ວນທຶນຮອນ ແລະ ແຮງງານໃຫ້ມີສ່ວນຮ່ວມ ໃນການບູລະນະຮັກສາ, ກໍ່ສ້າງ, ສ້ອມແປງ ເສັ້ນທາງ ຢູ່ພາຍໃນເມືອງ ໂດຍສະເພາະເກີດເຫດສຸກເສີນ ເຊັ່ນ: ໄມ້ລົ້ມທັບທາງ, ດິນ ຫຼື ຫີນເຈື່ອນທັບທາງ, ທາງເຈື່ອນ, ທາງຂາດ, ຂົວຂາດ, ນໍ້າຖ້ວມ ແລະ ອື່ນໆ ຕ້ອງເປັນເຈົ້າການ ຄົ້ນຄວ້າວາງມາດຕະການ ຫຼື ຂໍທິດຊີ້ນຳ ຈາກຂັ້ນເທິງຂອງຕົນ ແກ້ໄຂໃຫ້ທັນການ;

5. ເປັນເຈົ້າການຄຸ້ມຄອງ, ຕິດຕາມ ແລະ ກວດກາ ການອອກໃບອະນຸຍາດຂຸດດິນ, ຖົມດິນ, ອະນຸຍາດປຸກສ້າງ ເພື່ອຕັກເຕືອນ, ກ່າວເຕືອນ, ສັ່ງໂຈະ, ປັບໄໝ, ທັບມ້າງ ບັນດາການກໍ່ສ້າງ ທີ່ບໍ່ໄດ້ຮັບອະນຸຍາດ, ບໍ່ຖືກຕ້ອງ ຕາມກົດໝາຍ ແລະ ການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ;

6. ລາຍງານສອ່ງແສງ ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງທາງຫຼວງ ໃຫ້ອົງການປົກຄອງເມືອງ ແລະ ພະແນກໂຍທາທິການ ແລະ ຂົນສົ່ງແຂວງ ຢ່າງເປັນປົກກະຕິ;

7. ປະຕິບັດ ສິດ ແລະ ໜ້າທີ່ອື່ນໆ ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 12 ສິດ ແລະ ໜ້າທີ່ ຂອງຈຸງານ ໂຍທາທິການ ແລະ ຂົນສົ່ງ ປະຈຳບ້ານ**

ຈຸງານໂຍທາທິການ ແລະ ຂົນສົ່ງ ປະຈຳບ້ານ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ໂຄສະນາ, ເຜີຍແຜ່ ຂໍ້ຕົກລົງສະບັບນີ້ ໃຫ້ ປະຊາຊົນພາຍໃນບ້ານຂອງຕົນ ເພື່ອຮັບຮູ້, ເຂົ້າໃຈ ແລະ ເຊື່ອມຊຶມຢ່າງທົ່ວເຖິງ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ;

2. ຄຸ້ມຄອງ ແລະ ປົກປັກຮັກສາ ໜ້າທາງ, ຂົວ, ທາງຄົນຍ່າງ,ຮ່ອງລະບາຍນໍ້າ, ຝາປິດປ່ອງລະບາຍນໍ້າ, ທໍ່ລະບາຍນໍ້າທຸກປະເພດ, ກຳແພງຕ້ານເຈື່ອນ, ກະຕ່າຫີນ, ປ້າຍສັນຍານຈະລາຈອນ, ຫຼັກໝາຍກິໂລແມັດ, ຫຼັກກັນໄພ, ຮາວກັນໂຄ້ງ, ໄຟແສງສະຫວ່າງ, ປ້າຍໂຄສະນາ, ບໍ່ດິນ, ບໍ່ວັດສະດຸ ທີ່ນຳໃຊ້ເຂົ້າໃນການກໍ່ສ້າງເສັ້ນທາງ, ບໍ່ໃຫ້ບຸກຄົນມາບຸກລຸກ, ມາຈັບຈ່ອງ ຫຼື ທຳລາຍ ແລະ ອື່ນໆ ໃນຂອບເຂດບ້ານຂອງຕົນ ຫຼື ຕາມການມອບໝາຍຂອງເມືອງ;

3. ຕິດຕາມ ແລະ ລາຍງານ ການລະເມີດຂໍ້ຕົກລົງສະບັບນີ້ ຫຼື ລະບຽບການອື່ນໆ ກ່ຽວກັບທາງຫຼວງ ໃຫ້ຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງ ແລະ ການຈັດຕັ້ງອື່ນທີ່ກ່ຽວຂ້ອງ ໃຫ້ວ່ອງໄວ, ທັນການ;

4. ປຸກລະດົມປະຊາຊົນ ໃຫ້ການຮ່ວມມື ໃນການປະກອບສ່ວນທຶນຮອນ, ແຮງງານ ເຂົ້າໃນການປົກປັກຮັກສາ, ສ້ອມແປງ ຂອບເຂດເສັ້ນທາງ ຢູ່ຕໍ່ໜ້າເຮືອນຂອງຕົນ ໂດຍຖືເປັນພັນທະຂອງໃຜລາວ ໃນຄວາມຮັບຜິດຊອບສ້ອມແປງ ເປັນຕົ້ນແມ່ນ: ອະນາໄມຮ່ອງລະບາຍ, ຖົມບອກ, ຖົມຂຸມ ເລີ່ມແຕ່ນ້ອຍໆເປັນຕົ້ນໄປ;

5. ປຸກລະດົມປະຊາຊົນ ໃຫ້ການຮ່ວມມື ໃນການປະກອບສ່ວນທຶນຮອນ, ແຮງງານ ເຂົ້າໃນການປົກປັກຮັກສາ, ສ້ອມແປງ ຂອບເຂດເສັ້ນທາງ ທີ່ນອນຢູ່ໃນຂອບເຂດບ້ານຂອງຕົນ ຖືເປັນຄວາມຮັບຜິດຊອບຂອງບ້ານຕົນນັ້ນ ຕ້ອງອອກແຮງງານສ້ອມແປງລວມໝູ່ ຢ່າງໜ້ອຍ 2-3 ຄັ້ງຕໍ່ປີ ໃນທຸກໆ ເດືອນ 3 ເດືອນ 6 ແລະ ເດືອນ 10 ຂອງປີ ເພື່ອເຮັດໃຫ້ ເສັ້ນທາງມີຄຸນນະພາບດີ ແລະ ເປັນເຈົ້າການໃນການລະດົມຊຸກຍູ້ຍົກຍ້າຍສິ່ງກີດຂວາງຕ່າງໆ ໃນເວລາມີການກໍ່ສ້າງ ຫຼື ສ້ອມແປງ;

6. ອຳນາດການປົກຄອງບ້ານ, ນາຍບ້ານ, ປກສ ບ້ານ ຕ້ອງເປັນເຈົ້າການ ຕິດຕາມກວດກາຕາມເສັ້ນທາງຫຼວງໃນຂອບເຂດບ້ານຂອງຕົນ, ຖ້າຫາກພົບເຫັນ ຜູ້ລະເມີດ ກົດໝາຍ ຫຼື ຂໍ້ຕົກລົງສະບັບນີ້ ຕ້ອງກ່າວເຕືອນ, ສຶກສາອົບຮົມ, ກັກຕົວ ຫຼື ປັບໄໝ ຕາມແຕ່ລະກໍລະນີທີ່ໄດ້ກຳນົດ ຢູ່ໃນຂໍ້ຕົກລົງສະບັບນີ້;

7. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການມອບໝາຍຂອງອົງການປົກຄອງເມືອງ.

## ໝວດທີ 4
## ຂໍ້ຫ້າມ

**ມາດຕາ 13 ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງຕ່າງໆ**

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ແລະ ນຳໃຊ້ເສັ້ນທາງ ຢູ່ແຂວງຊຽງຂວາງ ດັ່ງນີ້:

1. ເຄື່ອນໄຫວດຳເນີນ ທຸລະກິດສ່ວນບຸກຄົນ ເປັນຕົ້ນ: ການກໍ່ສ້າງເຂື່ອນໄຟຟ້າ, ຂຸດຄົ້ນ ຫີນຜາ, ຫີນແຮ່, ຊາຍ, ບໍ່ແຮ່ ແລະ ການກໍ່ສ້າງຂະໜາດໃຫຍ່ອື່ນໆ ທີ່ສ້າງຜົນກະທົບ ເຮັດໃຫ້ເສັ້ນທາງເປ່ເພ, ເສຍຫາຍ;

2. ຕິດຕັ້ງ ເສົາໄຟຟ້າ ຕາມແລວເສັ້ນທາງ ທີ່ນອນຢູ່ໃນ ຂອບເຂດສະຫງວນຂອງທາງແຕ່ລະປະເພດ ຕາມມາດຕາ 7 ຂອງຂໍ້ຕົກລົງສະບັບນີ້ ໂດຍບໍ່ໄດ້ຮັບອະນຸຍາດ ຈາກຂະແໜງໂຍທາທິການ ແລະ ຂົນສົ່ງທີ່ກ່ຽວຂ້ອງ;

3. ນຳໃຊ້ ລົດ ບັນທຸກນ້ຳໜັກເກີນມາດຕະຖານເຕັກນິກ ແລ່ນຕາມເສັ້ນທາງຫຼວງທຸກປະເພດ ໂດຍບໍ່ໄດ້ຮັບອະນຸຍາດ ຈາກພາກສ່ວນຄຸ້ມຄອງທາງຫຼວງທີ່ກ່ຽວຂ້ອງ;

4. ກໍ່ສ້າງ ຫຼື ຕັ້ງເຮືອນ ຫຼື ສິ່ງກໍ່ສ້າງ ຢູ່ໃກ້ ສົ້ນຂົວຕ່າງໆ, ຖ້າມີຄວາມຈຳເປັນ ຕ້ອງຂໍອະນຸຍາດ ຈາກຂະແໜງໂຍທາທິການ ແລະ ຂົນສົ່ງ, ແຕ່ຕ້ອງມີໄລຍະຫ່າງຈາກສົ້ນຂົວ ຢ່າງໜ້ອຍເບື້ອງລະ 50 ແມັດ;

5. ກໍ່ສ້າງ ເຮືອນ, ອາຄານ, ຕໍ່ເທີບ, ປຸກຕູບ ຫຼື ສິ່ງກໍ່ສ້າງອື່ນໆ ຈະແມ່ນຊົ່ວຄາວ ຫຼື ຖາວອນ ບໍ່ໃຫ້ກວມເອົາທາງຄົນຍ່າງ, ຮ່ອງລະບາຍນ້ຳ ຫຼື ເອົາ ບ່າທາງເປັນບ່ອນຈອດລົດຍາວນານ;

6. ວາງກອງໄມ້, ຫີນ, ຊາຍ, ດິນ, ເຫຼັກ ແລະ ວັດສະດຸອື່ນໆ ໃສ່ເສັ້ນທາງ, ແຄມທາງ, ທາງຍ່າງ ຫຼື ຮ່ອງນ້ຳແຄມທາງ;

7. ທຳລາຍ ຫຼື ມ້າງເພ ໜ້າທາງ, ຂົວ, ສົ້ນຂົວ, ທາງຄົນຍ່າງ, ຮ່ອງລະບາຍນ້ຳ, ທໍ່ລະບາຍນ້ຳທຸກປະເພດ, ກຳແພງກັນເຈື່ອນ, ກະຕ່າຫີນ, ປ້າຍສັນຍານຈະລາຈອນ, ຫຼັກໝາຍກິໂລແມັດ, ຫຼັກກັນໄພ, ຮາວກັນໂຄ້ງ, ລະບົບໄຟສັນຍານ, ໄຟແສງສະຫວ່າງ, ເສົາໄຟຟ້າເບື້ອງທາງ, ຄັນຄູກາງທາງ, ປ້າຍໂຄສະນາ ແລະ ອື່ນໆ;

8. ບັນທຸກ ຫີນ, ຊາຍ, ດິນ ຫຼື ວັດສະດຸອື່ນໆ ເກີນກຳນົດມາດຕະຖານເຕັກນິກ ເຮັດໃຫ້ວັດຖຸເຫຼົ່ານັ້ນຕົກເຮ່ຍໃສ່ທາງ ຫຼື ສະຖານທີ່ຊຸມຊົນ ຊຶ່ງໄດ້ສ້າງ ຄວາມເປິເປື້ອນ ແລະ ເຮັດໃຫ້ ການສັນຈອນພົບຄວາມຫຍຸ້ງຍາກ;

9. ລັກຊື້-ລັກຂາຍ ສິ່ງປະກອບ ຫຼື ສິ່ງປ້ອງກັນຄວາມປອດໄພ ຂອງທາງຫຼວງ ເຊັ່ນ ຝາປິດປ້ອງລະບາຍນ້ຳ, ຂຸມພັກນ້ຳ, ສົ້ນສ່ວນເຫຼັກຂົວ, ປ້າຍ, ຫຼັກປ້າຍສັນຍານ ແລະ ອື່ນໆ;

10. ຖົມຮ່ອງລະບາຍນ້ຳແຄມທາງ, ເອົາ ຮ່ອງລະບາຍນ້ຳຂອງທາງ ເປັນຮ່ອງເໝືອງເອົານ້ຳເຂົ້ານາ, ວາງທໍ່ນ້ອຍບໍ່ໄດ້ມາດຕະຖານເຕັກນິກ ເຂົ້າເຮືອນ, ເຂົ້າປ້ຳນ້ຳມັນ, ຖົມດິນສູງກວ່າໜ້າທາງ, ຕັດຕົ້ນໄມ້ໃສ່ຮ່ອງລະບາຍນ້ຳ, ໜ້າທາງ, ວາງ ສິ່ງກີດຂວາງ, ຖອກນ້ຳມັນ, ດັງໄຟ, ຖິ້ມສິ່ງເປິະເປື້ອນໃສ່ໜ້າທາງ, ຮ່ອງລະບາຍນ້ຳ ຫຼື ເຂດສະຫງວນຂອງທາງຫຼວງ;

11. ວາງເຄື່ອງຂາຍ, ວາງທ່ອນໄມ້, ກ້ອນຫີນ, ຖິ້ມຂີ້ເຫຍື້ອຊະຊາຍ ຫຼື ສິ່ງກີດຂວາງຕ່າງໆ ຕາມທາງຫຼວງ ໂດຍບໍ່ໄດ້ຮັບ ອະນຸຍາດຈາກອົງການທີ່ກ່ຽວຂ້ອງ;

12. ເຄື່ອນຍ້າຍຍານພາຫະນະຕີນເຫຼັກ ທຸກປະເພດ ຫຼື ຄຽນດ້ອຍໂສ້ ແລ່ນຕາມທາງປູຢາງ, ທາງເບຕົງ, ທາງປູແຮ່ ຫຼື ຂົວໂດຍບໍ່ໄດ້ຮັບອະນຸຍາດ ຈາກອົງການທີ່ກ່ຽວຂ້ອງ ແລະ ບໍ່ມີການປ້ອງກັນຄວາມປອດໄພ;

13. ລ້ຽງ, ປ່ອຍ ຫຼື ເຄື່ອນຍ້າຍສັດຕາມທາງຫຼວງ ຫຼື ໃນຂອບເຂດສະຫງວນຂອງທາງ, ຖ້າມີຄວາມຈຳເປັນຕ້ອງມີຜູ້ຄຸ້ມຄອງ, ຕິດຕາມ ໂດຍຕ້ອງຮັບປະກັນບໍ່ໃຫ້ສັດ ຫຼື ຝູງສັດກີດຂວາງການສັນຈອນ ຂອງຍານພາຫະນະ;

14. ຂັດຂວາງ, ບໍ່ອຳນວຍຄວາມສະດວກ ຫຼື ບໍ່ໃຫ້ການຮ່ວມມື ການດຳເນີນການກໍ່ສ້າງ, ບູລະນະຮັກສາ ແລະ ສ້ອມແປງທາງຫຼວງ;

15. ຖາງປ່າ, ເຮັດໄຮ່, ເຮັດສວນ ຫຼື ທຳກິດຈະກຳຕ່າງໆ ຢູ່ແຄມທາງ ຫຼື ເຂດສະຫງວນຂອງທາງ. ກໍລະນີມີຄວາມຈຳເປັນ ຕ້ອງໄດ້ຮັບອະນຸຍາດ ຈາກຂະແໜງການໂຍທາທິການ ແລະ ຂົນສົ່ງ ຫຼື ອົງການປົກຄອງທ້ອງຖິ່ນທີ່ມີຄວາມຮັບຜິດຊອບ ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ຕົກລົງສະບັບນີ້;

16. ຈັດ ພິທີງານດອງ ແລະ ງານບຸນຕ່າງໆ ກວມເອົາທາງຫຼວງ ເຮັດໃຫ້ກີດຂວາງການສັນຈອນ ໂດຍບໍ່ໄດ້ຮັບອະນຸຍາດ ຈາກຂະແໜງໂຍທາທິການ ແລະ ຂົນສົ່ງ ຫຼື ອຳນາດການປົກຄອງບ້ານ ຕາມຄວາມຮັບຜິດຊອບຂອງຕົນ;

17. ມີ ພຶດຕິກຳອື່ນໆ ທີ່ເປັນການລະເມີດ ຕໍ່ຂໍ້ຕົກລົງສະບັບນີ້ ຫຼື ກົດໝາຍ ແລະ ລະບຽບການ ກ່ຽວກັບການປົກປັກຮັກສາ ແລະ ຄຸ້ມຄອງທາງຫຼວງ;

18. ຕິດຕັ້ງ ເສົາໄຟຟ້າ ຕາມແລວເສັ້ນທາງ ໃສ່ໃນເຂດສະຫງວນຂອງທາງແຕ່ລະປະເພດ ຕາມທີ່ກຳນົດໄວ້ໃນມາດຕາ 7 ຂອງຂໍ້ຕົກລົງສະບັບນີ້ ໂດຍບໍ່ໄດ້ຮັບອະນຸຍາດ ຈາກຂະແໜງໂຍທາທິການ ແລະ ຂົນສົ່ງ.

ມາດຕາ 14 ຫ້າມເຈົ້າໜ້າທີ່ພະນັກງານ ຫຼື ອົງການຈັດຕັ້ງຂອງລັດ

ຫ້າມ ເຈົ້າໜ້າທີ່ພະນັກງານ ຫຼື ອົງການຈັດຕັ້ງຂອງລັດ ມີພຶດຕິກຳດັ່ງນີ້:

1. ໃຊ້ສິດ, ຕຳແໜ່ງ ແລະ ອຳນາດ ເພື່ອໃຊ້ຄວາມຮຸນແຮງ, ບັງຄັບ, ນາບຂູ່ ຫຼື ໃຊ້ ມາດຕະການຕ່າງໆ ທີ່ບໍ່ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການຂອງລັດ ຕໍ່ພະນັກງານປະຕິບັດການຄຸ້ມຄອງທາງຫຼວງ;

2. ສົມຮູ້ຮ່ວມຄິດ, ປົກປິດ, ຊ່ວຍເຫຼືອ ຜູ້ລະເມີດ ຂໍ້ຕົກລົງສະບັບນີ້;

3. ສົມຮູ້ຮ່ວມຄິດ ຫຼື ສ້າງເງື່ອນໄຂ ໃຫ້ບຸກຄົນໃດໜຶ່ງ ລັກຊື້-ລັກຂາຍ ປ້າຍສັນຍານຈະລາຈອນ, ຫຼັກກັນໄພ , ຮາວກັນໂຄ້ງ, ປ້າຍໂຄສະນາ ແລະ ອື່ນໆເປັນຕົ້ນ.

## ໝວດທີ 5
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ.

**ມາດຕາ 15 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການປະກອບສ່ວນ ດ້ານທຶນຮອນ ຫຼື ແຮງງານ ເຂົ້າໃນວຽກງານການຄຸ້ມຄອງທາງຫຼວງ ເຊັ່ນ: ການບູລະນະ, ປົກປັກຮັກສາ, ກໍ່ສ້າງເສັ້ນທາງ, ໃຫ້ຂໍ້ມູນກ່ຽວກັບການເສຍຫາຍ, ການທຳລາຍທາງຫຼວງ ຈະໄດ້ຮັບການຍ້ອງຍໍ ແລະ ການປະຕິບັດນະໂຍບາຍອື່ນຕາມລະບຽບການ.

**ມາດຕາ 16 ມາດຕະການສຶກສາອົບຮົມ ແລະ ກ່າວເຕືອນ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ລະເມີດຂໍ້ຕົກລົງສະບັບນີ້ ເທື່ອທີ່ໜຶ່ງ ຈະຖືກກ່າວເຕືອນ, ເທື່ອທີສອງ ໃນຄວາມຜິດສະຖານດຽວກັນ ຈະຖືກປັບໄໝສອງເທົ່າຕົວ ພ້ອມທັງຖືກກັກໃບຂັບຂີ່ໄວ້ສາມເດືອນ, ເທື່ອທີສາມ ຈະຖືກປັບໄໝສາມເທົ່າຕົວ ພ້ອມທັງຍຶດໃບຂັບຂີ່ ແລະ ຍົກເລີກການນຳໃຊ້ໃບຂັບຂີ່ເປັນເວລາສອງປີ.

**ມາດຕາ 17 ມາດຕະການປັບໄໝ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປັບໄໝເປັນເງິນ ຕາມດຳລັດສະບັບເລກທີ 188/ນຍ, ລົງວັນທີ 03 ກໍລະກົດ 2007 ດັ່ງນີ້:

1. ລົດບັນທຸກ ແລ່ນເທິງໜ້າທາງຫຼວງ ແຕ່ລະປະເພດ ທີ່ນ້ຳໜັກເກີນ ອັດຕາ:
 - 0.5-0.9 ໂຕ່ນ ຈະຖືກປັບໄໝ 67,000 ກີບ ຕໍ່ ກິໂລແມັດ ຕໍ່ຄັນ;
 - 1-5 ໂຕ່ນ ຈະຖືກປັບໄໝ 85,000 ກີບ ຕໍ່ ກິໂລແມັດ ຕໍ່ຄັນ;
 - 5-10 ໂຕ່ນ ຈະຖືກປັບໄໝ 206,000 ກີບ ຕໍ່ ກິໂລແມັດ ຕໍ່ຄັນ;
 - 10 ໂຕ່ນ ຂຶ້ນໄປ ຈະຖືກປັບໄໝ 545,000 ກີບ ຕໍ່ ກິໂລແມັດ ຕໍ່ຄັນ.

2. ໄດ້ປຸກສ້າງອາຄານ, ຕໍ່ເທີບ, ປຸກຕູບ ຫຼື ປຸກສ້າງຮ້ານຂາຍເຄື່ອງອື່ນໆ ທີ່ກວມເອົາເຂດສະຫງວນຂອງທາງຫຼວງ, ທາງຄົນຍ່າງ, ຮ່ອງລະບາຍນ້ຳ ໂດຍບໍ່ໄດ້ຮັບອະນຸຍາດ ຈາກອົງການທີ່ກ່ຽວຂ້ອງ ຈະຖືກກ່າວເຕືອນ, ເຮັດບົດບັນທຶກ ພ້ອມທັງຖືກປັບໄໝ 300,000 ກີບ ແລະ ໃຫ້ຍົກຍ້າຍອອກ ພາຍໃນ 1 ເດືອນ ຖ້າກາຍກຳນົດຈະ
ຖືກປັບໄໝເພີ່ມ ມື້ລະ 10,000 ກີບ;

3. ໄດ້ກອງວັດສະດຸກໍ່ສ້າງ ເຊັ່ນ: ກອງໄມ້, ກອງຫີນ, ກອງຊາຍ, ກອງດິນ, ກອງເຫຼັກ ແລະ ວັດສະດຸອື່ນໆ ໃສ່ເສັ້ນທາງ, ແຄມທາງ, ທາງຍ່າງ ຫຼື ຮ່ອງນ້ຳແຄມທາງ ຊຶ່ງເປັນການກີດຂວາງການສັນຈອນ ຈະຖືກປັບໄໝ 200,000 ກີບ, ພ້ອມທັງໃຫ້ຍົກຍ້າຍອອກພາຍໃນ 24 ຊົ່ວໂມງ. ຖ້າກາຍກຳນົດ ຈະຖືກປັບໄໝເພີ່ມ ຊົ່ວໂມງລະ 10,000 ກີບ ຕໍ່ແມັດກ້ອນ ພ້ອມທັງເຮັດບົດບັນທຶກ ແລະ ກ່າວເຕືອນ. ໃນກໍລະນີເກີດອຸບັດຕິເຫດ ຍ້ອນວັດສະດຸດັ່ງກ່າວ ເຈົ້າຂອງວັດສະດຸນັ້ນຕ້ອງຮັບຜິດຊອບຕໍ່ຜົນເສຍຫາຍທັງໝົດ;

4. ໄດ້ເຮັດໃຫ້ໂຄງປະກອບ, ສິ່ງປະກອບ ຫຼື ກິດຈະການປ້ອງກັນຄວາມປອດໄພ ຂອງເສັ້ນທາງເສຍຫາຍ ເຊັ່ນ: ໜ້າທາງ, ຂົວ, ກຳແພງກັນເຈື່ອນ, ລະບົບປ້າຍ ຫຼື ເຄື່ອງໝາຍຈະລາຈອນ, ລະບົບໄຟສັນຍານ, ລະບົບໄຟແສງສະຫ່ວາງ ຫຼື ເສົາໄຟຟ້າເບື້ອງທາງ, ຄັນຄູກາງທາງ, ກິດຈະການປ້ອງກັນຄວາມປອດໄພຂອງທາງ, ສິ່ງອຳນວຍ

ຄວາມສະດວກ ໃນການຈະລາຈອນອື່ນໆ ເກີດການເປ່ເພເສຍຫາຍ ຈະຖືກກ່າວເຕືອນ, ເຮັດບົດບັນທຶກ ແລະ ຖືກປັບໄໝ 200,000 ກີບ ພ້ອມທັງໃຊ້ແທນ ຄ່າສ້ອມແປງທີ່ຖືກເປ່ເພເສຍຫາຍທັງໝົດ ຕາມມູນຄ່າຕົວຈິງ.

5. ໄດ້ຖົມຮ່ອງລະບາຍນໍ້າຂ້າງທາງ, ວາງທໍ່ນ້ອຍບໍ່ໄດ້ມາດຖານເຂົ້າເຮືອນ, ເຂົ້າສະຖານທີ່ຫ້ອງການ, ເຂົ້າປ້ຳນໍ້າມັນ, ຖົມດິນສູງກວ່າໜ້າທາງ ຕ້ອງໃຫ້ຮື້ຖອນອອກ ຫຼື ຕ້ອງໄດ້ວາງທໍ່ທີ່ໄດ້ມາດຕະຖານເຕັກນິກ ຂອງຮ່ອງລະບາຍນໍ້າ ດ້ວຍທຶນຂອງຕົນເອງ. ຖ້າຫາກບໍ່ປະຕິບັດຈະຖືກກ່າວເຕືອນ, ເຮັດບົດບັນທຶກ ແລະ ປັບໄໝ 200,000 ກີບ ຕໍ່ໜຶ່ງຈຸດ ພ້ອມທັງໃຫ້ເຈົ້າໜ້າທີ່ຈັກຮື້ອອກ ແລະ ໃຫ້ຜູ້ກະທຳຜິດ ເສຍຄ່າສິ້ນເປືອງຕົວຈິງ;

6. ໄດ້ບັນທຸກຫີນ, ຊາຍ, ດິນ ແລະ ສິນຄ້າປະເພດອື່ນໆ ທີ່ບໍ່ມີການປົກຫຸ້ມເປັນຢ່າງດີ, ເຮັດໃຫ້ສິ່ງທີ່ບັນທຸກນັ້ນຕົກເຮ່ຍໃສ່ທາງ ຫຼື ເຂດຊຸມຊົນ ເຮັດໃຫ້ມີຄວາມເປິເປື້ອນ ແລະ ມີຄວາມສັບສົນ ຈະຖືກປັບໄໝ 100.000 ກີບ ຕໍ່ຖ້ຽວຕໍ່ຄັນ ພ້ອມທັງຮັບຜິດຊອບຄ່າໃຊ້ຈ່າຍ ໃນການທຳຄວາມສະອາດ ເສັ້ນທາງ ຫຼື ສະຖານທີ່ຊຸມຊົນນັ້ນ;

7. ລັກຊື້-ລັກຂາຍ ສິ່ງປະກອບ ແລະ ສິ່ງປ້ອງກັນຄວາມປອດໄພຂອງທາງຫຼວງ ເຊັ່ນ: ຝາປິດຮູລະບາຍນໍ້າ, ຂຸມພັກນໍ້າ, ສິ້ນສ່ວນເຫຼັກຂົວ, ປ້າຍ, ຫຼັກປ້າຍສັນຍານ ແລະ ອື່ນໆ ຈະຖືກກ່າວເຕືອນ, ເຮັດບົດບັນທຶກ ແລະ ຖືກປັບໄໝ 200,000 ກີບ ຕໍ່ຄັ້ງ ແລະ ໃຊ້ແທນ ຄ່າເສຍຫາຍ ຕາມມູນຄ່າຕົວຈິງ ຂອງສິ່ງຂອງເຫຼົ່ານັ້ນ;

8. ຕັດຕົ້ນໄມ້ ທັບຖົມຮ່ອງລະບາຍນໍ້າ, ໃສ່ໜ້າທາງ, ຖົມດິນສູງກວ່າໜ້າທາງເກີນການກຳນົດມາດຕະຖານເຕັກນິກ, ວາງສິ່ງກີດຂວາງ, ຖອກນໍ້າມັນ, ດັງໄຟ, ຖິ້ມສິ່ງເປິເປື້ອນໃສ່ໜ້າທາງ, ຮ່ອງລະບາຍນໍ້າ, ເຂດສະຫງວນຂອງທາງຫຼວງ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ເຮັດບົດບັນທຶກ ແລະ ປັບໄໝ 200,000 ກີບຕໍ່ຄັ້ງຕໍ່ໜຶ່ງຈຸດ, ພ້ອມທັງສ້ອມແປງຄືນ ແລະ ໃຊ້ແທນຄ່າເສຍຫາຍຕາມມູນຄ່າຕົວຈິງ;

9. ເຄື່ອນໄຫວດຳເນີນທຸລະກິດສ່ວນບຸກຄົນ ເປັນຕົ້ນແມ່ນ: ການກໍ່ສ້າງເຂື່ອນໄຟຟ້າ, ຂຸດຄົ້ນຫີນຜາ, ຫີນແຮ່-ຊາຍ , ບໍ່ແຮ່ ແລະ ການກໍ່ສ້າງຂະໜາດໃຫຍ່ອື່ນໆ ທີ່ສ້າງຜົນກະທົບ ເຮັດໃຫ້ເສັ້ນທາງເປ່ເພເສຍຫາຍ ຈະຕ້ອງໄດ້ກໍ່ສ້າງ ຫຼື ສ້ອມແປງຄືນສູ່ສະພາບເດີມ ດ້ວຍທຶນຂອງຕົນເອງ ຫຼື ຈ່າຍຄ່າກໍ່ສ້າງ ຫຼື ສ້ອມແປງ ໃຫ້ ຜູ້ຈັດຕັ້ງປະຕິບັດແທນ ຕາມມູນຄ່າຕົວຈິງ ທີ່ຂະແໜງ ໂຍທາທິການ ແລະ ຂົນສົ່ງ ເຊັນຢັ້ງຢືນ. ການກໍ່ສ້າງ ຫຼື ສ້ອມແປງຄືນໃໝ່ ຕ້ອງເລີ່ມລົງມືປະຕິບັດພາຍໃນກຳນົດ ສາມສິບວັນ (1 ເດືອນ) ພາຍຫຼັງໄດ້ຮັບແຈ້ງການ, ຖ້າເກີນກຳນົດ ຈະຖືກປັບໄໝ ເປັນເງິນ 500,000 ກີບ ຕໍ່ໜຶ່ງວັນ ພ້ອມທັງຈ່າຍຄ່າກໍ່ສ້າງ ຫຼື ສ້ອມແປງຕົວຈິງ;

10. ຕິດຕັ້ງ ເສົາໄຟຟ້າ ຕາມແລວເສັ້ນທາງ ຫຼື ໃນເຂດສະຫງວນຂອງທາງ ໂດຍບໍ່ໄດ້ຮັບອະນຸຍາດລ່ວງໜ້າຈາກຂະແໜງໂຍທາທິການ ແລະ ຂົນສົ່ງ ຈະຖືກປັບໄໝ 1,000,000 ກີບ ຕໍ່ໜຶ່ງເສົາໜຶ່ງຈຸດ ພ້ອມທັງໃຫ້ຍົກຍ້າຍອອກຈາກຈຸດດັ່ງກ່າວ ດ້ວຍຄ່າໃຊ້ຈ່າຍຂອງຕົນເອງ ຕາມການແນະນຳ ຂອງຂະແໜງ ໂຍທາທິການ ແລະ ຂົນສົ່ງ. ກໍລະນີການຕິດຕັ້ງເສົາໄຟຟ້າ ກ່ອນຂໍ້ຕົກລົງສະບັບນີ້, ຖ້າຂະແໜງ ໂຍທາທິການ ແລະ ຂົນສົ່ງ ມີຄວາມຈຳເປັນ ແລະ ແຈ້ງໃຫ້ຍົກຍ້າຍ, ຕ້ອງໃຫ້ຄວາມຮ່ວມມືຈັດຕັ້ງປະຕິບັດ ໂດຍບໍລິສັດ, ລັດວິສາຫະກິດ ຫຼື ບໍລິສັດໄຟຟ້າ ຮັບຜິດຊອບຄ່າສິ້ນເປືອງທັງໝົດເອົາເອງ. ຖ້າເກີນກຳນົດແຈ້ງການ ຕ້ອງປະຕິບັດຕາມຂໍ້ທີ 9 ຂ້າງເທິງນີ້;

11. ວາງເຄື່ອງຂາຍ, ປະຖິ້ມທ່ອນໄມ້, ກ້ອນຫີນ ແລະ ສິ່ງກີດຂວາງ ຕາມທາງຫຼວງ ຈະຖືກກ່າວເຕືອນ, ເຮັດບົດບັນທຶກ ແລະ ຖືກປັບໄໝ 200,000 ກີບຕໍ່ຄັ້ງຕໍ່ໜຶ່ງຈຸດ;

12. ເຄື່ອນຍ້າຍ ຍານພາຫະນະຕີນເຫຼັກ ຫຼື ຄຣູນດ້ວຍໂສ້ ແລ່ນເທິງໜ້າທາງປູຢາງ, ທາງເບຕົງ ຫຼື ໜ້າທາງອື່ນ ຈະຖືກກ່າວເຕືອນເຮັດບົດບັນທຶກ ແລະ ຖືກປັບໄໝ ດັ່ງນີ້:

- ລົດໄຖນາເດີນຕາມຕີນເຫຼັກທຸກປະເພດ 100,000 ກີບ ຕໍ່ຄັ້ງຕໍ່ໜຶ່ງຄັນ;
- ລົດໄຖນາຕີນເຫຼັກ (ຕະຣັກເຕີ້) ແລະ ກົນຈັກໜັກຕີນເຫຼັກທຸກປະເພດ 200,000 ກີບ ຕໍ່ຄັ້ງຕໍ່ໜຶ່ງຄັນ;

ນອກຈາກນັ້ນ, ຍັງຕ້ອງຮັບຜິດຊອບທົດແທນຄ່າສ້ອມແປງຕອນທາງ ທີ່ຖືກເປ່ເພເສຍຫາຍ ຕາມມູນຄ່າສ້ອມແປງຕົວຈິງ ໂດຍຄິດໄລ່ເປັນຕາແມັດ ຫຼື ແມັດຍາວ ຕາມເຕັກນິກວິຊາການ;

13. ລ້ຽງ ຫຼື ປ່ອຍ ສັດທຸກຊະນິດ ຕາມເສັ້ນທາງຫຼວງ ຫຼື ໃນຂອບເຂດສະຫງວນທາງ ຫຼື ເຄື່ອນຍ້າຍສັດລ້ຽງຕາມທາງຫຼວງ ໂດຍບໍ່ມີຜູ້ຄຸ້ມຄອງດູແລ, ເປັນການກີດຂວາງການສັນຈອນ ຄັ້ງທີໜຶ່ງ ເຈົ້າຂອງສັດ ຈະຖືກກ່າວເຕືອນ, ຄັ້ງທີສອງ ຈະຖືກປັບໄໝ 20,000 ກີບ ຕໍ່ສັດໜຶ່ງໂຕ ຕໍ່ວັນຄືນ, ຄັ້ງທີສາມ ຈະຖືກປັບໄໝທົບສອງເທົ່າຕົວ ແລ້ວຄິດໄລ່ຄ່າແຮງງານ ໃຫ້ຜູ້ທີ່ກັກສັດລ້ຽງໄວ້ນັ້ນຢ່າງເໝາະສົມ; ກໍລະນີສັດລ້ຽງ ຖືກປະປ່ອຍ ຫຼື ຍ່າງຕາມເສັ້ນທາງ ໂດຍບໍ່ມີຜູ້ຄຸ້ມຄອງດູແລ, ເຈົ້າໜ້າທີ່ ມີສິດກັກສັດໄວ້ ພ້ອມທັງປັບໄໝ 10,000 ກີບຕໍ່ສັດໜຶ່ງໂຕ ຕໍ່ໜຶ່ງ

ຄືນ ຈົນກວ່າເຈົ້າຂອງສັດຈະມາໄຖ່ຖອນເອົາຄືນ. ໃນກໍລະນີສັດຫາກເປັນຕົ້ນເຫດ ຂອງການເກີດອຸບັດຕິເຫດ ເຈົ້າຂອງສັດລ້ຽງ ຕ້ອງຮັບຜິດຊອບ ຕໍ່ຄວາມເສຍຫາຍທັງໝົດທີ່ເກີດຂຶ້ນ;

14. ການຂັດຂວາງ, ບໍ່ອຳນວຍຄວາມສະດວກ ຫຼື ບໍ່ໃຫ້ການຮ່ວມມື ການດຳເນີນການກໍ່ສ້າງ, ບູລະນະ ຮັກສາ ແລະ ສ້ອມແປງທາງຫຼວງຈະຖືກກ່າວເຕືອນ, ເຮັດບົດບັນທຶກ ແລະ ຖືກປັບໃໝ 100,000 ກີບ ຕໍ່ໜຶ່ງຄັ້ງ;

15. ການຈັດພິທີ ຫຼື ງານບຸນຕ່າງໆ ກວມສ່ວນໃດສ່ວນໜຶ່ງ ຫຼື ທັງໝົດຄວາມກວ້າງທາງຫຼວງ ໂດຍບໍ່ໄດ້ຮັບອະນຸຍາດຈາກອຳນາດການປົກຄອງບ້ານ ຫຼື ຈາກຂະແໜງ ໂຍທາທິການ ແລະ ຂົນສົ່ງ ຈະຖືກກ່າວເຕືອນ ແລະ ຖືກປັບໃໝ 200,000 ກີບ ຕໍ່ໜຶ່ງຄັ້ງໜຶ່ງຈຸດໜຶ່ງວັນຄືນ. ກໍລະນີເກີດອຸບັດຕິເຫດ ຍ້ອນການຈັດພິທີດັ່ງກ່າວ ແມ່ນໃຫ້ຜູ້ກ່ຽວຮັບຜິດຊອບທັງໝົດ;

16. ການຖາງປ່າ, ເຮັດໄຮ່, ເຮັດສວນ ຕາມແລວທາງ ຫຼື ໃນຂອບເຂດສະຫງວນຂອງທາງຫຼວງ ໂດຍບໍ່ໄດ້ຮັບອະນຸຍາດ ຈາກອຳນາດການປົກຄອງບ້ານ, ເມືອງ ຫຼື ຂະແໜງ ໂຍທາທິການ ແລະ ຂົນສົ່ງ ຈະຖືກກ່າວເຕືອນ, ເຮັດບົດບັນທຶກ ແລະ ປັບໃໝ 25,000 ກີບ ຕໍ່ໜຶ່ງແມັດຍາວຕາມແລວເສັ້ນທາງ;

**ມາດຕາ 18 ການຄຸ້ມຄອງ ແລະ ນຳໃຊ້ເງິນ ທີ່ໄດ້ຮັບຈາກການປັບໃໝ**

ການຄຸ້ມຄອງ ແລະ ນຳໃຊ້ເງິນ ທີ່ໄດ້ຮັບຈາກການປັບໃໝ ແມ່ນມອບເຂົ້າງົບປະມານ ຂອງແຂວງ 20% ຂອງລາຍຮັບທັງໝົດ, 20% ມອບໃຫ້ ຫ້ອງການ ໂຍທາທິການ ແລະ ຂົນສົ່ງເມືອງ ນຳໃຊ້ເຂົ້າໃນວຽກງານຄຸ້ມຄອງທາງຫຼວງພາຍໃນເມືອງ ແລະ 60% ມອບໃຫ້ບ້ານ ນຳໃຊ້ເຂົ້າໃນວຽກງານຄຸ້ມຄອງທາງຫຼວງ ໃນຂອບເຂດຄວາມຮັບຜິດຊອບຂອງບ້ານ ເປັນຕົ້ນແມ່ນ: ການບູລະນະ, ປົກປັກຮັກສາ, ສ້ອມແປງ ເສັ້ນທາງ ໃຫ້ມີຄຸນນະພາບດີ ແລະ ນຳໃຊ້ໄດ້ຍາວນານ ໂດຍປະຕິບັດວິໄນທາງການເງິນ ຢ່າງເຂັ້ມງວດ.

## ໝວດທີ 6

## ບົດບັນຍັດສຸດທ້າຍ

**ມາດຕາ 19 ມາດຕາການຈັດຕັ້ງປະຕິບັດ**

ມອບໃຫ້ທຸກພາກສ່ວນ, ພະແນກການ, ກົມກອງ, ກຳລັງປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ບັນດາອົງການຈັດຕັ້ງຕ່າງໆທັງພາຍໃນ ແລະ ຕ່າງປະເທດ, ບັນດາເມືອງ ແລະ ປະຊາຊົນທຸກຊົ້ນຄົນ ທີ່ເຄື່ອນໄຫວດຳລົງຊີວິດຢູ່ ແຂວງຊຽງຂວາງ ເປັນຜູ້ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 20 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີເຈົ້າແຂວງລົງລາຍເຊັນ ແລະ ພາຍຫຼັງ 15 ວັນ ນັບແຕ່ວັນທີໄດ້ພິມລົງຈົດໝາຍເຫດ ທາງລັດຖະການເປັນຕົ້ນໄປ.

ຂໍ້ຕົກລົງ ຫຼື ຄຳສັ່ງສະບັບໃດ ທີ່ຂັດກັບ ຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກລົບລ້າງ.

**ເຈົ້າແຂວງ**

ບຸນຕົ້ນ ຈັນທະພອນ